ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຫົວໜ້າກົມນະໂຍບາຍເງິນຕາແຈ້ງຂ່າວ ວຽກງານການຄຸ້ມຄອງເງິນຕາຕ່າງປະເທດ




ໃນຕອນບ່າຍວັນ ທີ 15 ມິຖຸນາ 2022 ທີ່ຜ່ານມາ ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ຫົວໜ້າກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ແຈ້ງຂ່າວກ່ຽວກັບວຽກງານການຄຸ້ມຄອງເງິນຕາຕ່າງປະເທດຕໍ່ສື່ມວນຊົນຢູ່ທີ່ຫ້ອງປະຊຸມ ທຫລ ເຊິ່ງມີເນື້ອໃນລາຍລະອຽດດັ່ງນີ້:

ຂ້າພະເຈົ້າ ຕາງໜ້າ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງຂ່າວ-ປະຊາສຳພັນມາຍັງບັນດາພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ ທະຫານ, ຕຳຫຼວດ ໃນຂອບເຂດທົ່ວປະເທດກ່ຽວກັບບາງວຽກງານໃນການຄຸ້ມຄອງເງິນຕາຕ່າງປະເທດຢູ່ ສປປ ລາວ. ໃນເງື່ອນໄຂທີ່ ສປປ ລາວ ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ - ການເງິນ - ເງິນຕາ ດັ່ງທີ່ພວກເຮົາເຫັນການເພີ່ມຂຶ້ນຂອງອັດຕາເງິນເຟີ້, ການເໜັງຕີງຂອງອັດຕາແລກປ່ຽນ, ລາຄານ້ຳມັນ ຊຶ່ງບັນຫາດັ່ງກ່າວ ຫຼາຍປະເທດກໍພວມປະເຊີນຢູ່ເຊັ່ນດຽວກັນ. ລວມທັງປະເທດທີ່ມີເສດຖະກິດຂະໜາດໃຫຍ່ ແລະ

ເຂັ້ມແຂງ ກໍປະເຊີນກັບບັນຫາອັດຕາເງິນເຟີ້ເພີ່ມຂຶ້ນສູງທີ່ສຸດ ໃນຮອບຫຼາຍ 10 ປີ. ໃນສະພາບແວດລ້ອມຄືແນວນີ້, ທຸກຂະແໜງ ການທັງພາກລັດ ແລະ ທຸລະກິດ ກໍໄດ້ພະຍາຍາມແກ້ໄຂບັນຫາດ້ວຍມາດຕະການຈຳນວນໜຶ່ງຢ່າງເໝາະສົມ ໂດຍສະເພາະມາດຕະການທີ່ທະນາຄານແຫ່ງ ສປປ ລາວ ພວມຈັດຕັ້ງປະຕິບັດໃນຂອບເຂດຂອງນະໂຍບາຍເງິນຕາແມ່ນສຸມໃສ່ປັບປຸງວຽກງານການຄຸ້ມຄອງເງິນຕາຕ່າງປະເທດ, ການແລກປ່ຽນເງິນຕາ, ການຊຸກຍູ້ສົ່ງເສີມການຂະຫຍາຍຕົວຂອງເສດຖະກິດ, ຫຼຸດຜ່ອນການເພີ່ມຂຶ້ນຂອງອັດຕາເງິນເຟີ້ ແລະ ອື່ນໆ ດັ່ງທີ່ບັນດາທ່ານໄດ້ຮັບຟັງຈາກການລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ສະໄໝສາມັນ ເທື່ອທີ 3 ຊຸດທີ IX.

ຄຽງຄູ່ກັນນີ້, ໃນການຈັດຕັ້ງປະຕິບັດມາດຕະການຕ່າງໆ ກໍປາກົດມີຄວາມເຂົ້າໃຈຂອງສັງຄົມທີ່ອາດຈະຄາດເຄື່ອນຈາກຄວາມເປັນຈິງ ແລະ ບໍ່ທັນເປັນເອກະພາບຢ່າງທົ່ວເຖິງ ຕໍ່ບາງວິທີການໃນການຈັດຕັ້ງປະຕິບັດຕົວຈິງຂອງຂະແໜງການ ຊຶ່ງອາດຈະເກີດຈາກການສື່ສານປະຊາສຳພັນຂອງຂະແໜງການຍັງບໍ່ທັນມີປະສິດທິພາບ ແລະ ບໍ່ກວ້າງຂວາງເທົ່າທີ່ຄວນ ເປັນຕົ້ນ **ເມື່ອບໍ່ດົນມານີ້ ກໍ່ມີການຮັບຮູ້ ແລະ ເຂົ້າໃຈຄາດເຄື່ອນກ່ຽວກັບແຈ້ງການສະບັບວັນທີ 9 ແລະ ວັນທີ 13 ມິຖຸນາ 2022 ຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ກ່ຽວກັບການຖອນເງິນທີ່ໂອນຜ່ານລະບົບບໍລິການຮັບເງິນດ່ວນ Money gram.** ຂ້າພະເຈົ້າ ໃນນາມກົມນະໂຍບາຍເງິນຕາ ຕາງໜ້າໃຫ້ທະນາຄານແຫ່ງ ສປປ ລາວ ຂໍປະຊາສຳພັນມາຍັງບັນດາທ່ານໃຫ້ເຂົ້າໃຈເປັນເອກະພາບວ່າ: **ປັດຈຸບັນ ທະນາຄານທຸລະກິດ ກໍຄືລະບົບ Money gram ຍັງສືບຕໍ່ບໍລິການໃຫ້ພໍ່ແມ່ປະຊາຊົນ ສາມາດຖອນເງິນໄດ້ຕາມປົກກະຕິ ຄືຜ່ານມາ. ສະນັ້ນ, ຂໍແຈ້ງມາຍັງບັນດາທ່ານຊາບ ແລະ ໝັ້ນໃຈໃນຄວາມປອດໄພ ຂອງຊັບສິນ ກໍຄື ເງິນຝາກຂອງທ່ານ ຢູ່ນຳລະບົບທະນາຄານ ຂອງພວກເຮົາ.**

ຕິດພັນກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ ແລະ ບັນດາຂະແໜງການກ່ຽວຂ້ອງ ແມ່ນໄດ້ຈັດຕັ້ງປະຕິບັດໜ້າທີ່ຕາມບົດບາດຂອງໃຜລາວ ພາຍໃຕ້ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ ລົງວັນທີ 22 ທັນວາ 2014, ໃນນັ້ນ ມາດຕາ 15 ໄດ້ກຳນົດກ່ຽວກັບການເປີດບັນຊີ ແລະ ການນຳໃຊ້ເງິນຕາ ໃນບັນຊີເງິນຝາກ ຢູ່ ສປປ ລາວ ຄື: **ຜູ້ມີພູມລຳເນົາ ຢູ່ ສປປ ລາວ ສາມາດນຳເງິນກີບ ແລະ ເງິນຕາຕ່າງປະເທດ ທີ່ມີແຫຼ່ງທີ່ມາຖືກຕ້ອງ ຝາກເຂົ້າບັນຊີຂອງຕົນ ທີ່ເປີດໄວ້ນຳທະນາຄານທຸລະກິດ ຢູ່ ສປປ ລາວ ແລະ ເງິນໃນບັນຊີດັ່ງກ່າວ ສາມາດຖອນ ແລະ ຮັບດອກເບ້ຍ ຕາມປະເພດບັນຊີເງິນຝາກຂອງຕົນນຳທະນາຄານທຸລະກິດ.**

ສະນັ້ນ, ອີງໃສ່ນິຕິກຳດັ່ງກ່າວຂ້າງເທິງ ທະນາຄານແຫ່ງ ສປປ ລາວ ຂໍຢັ້ງຢືນວ່າ ບັນດາທ່ານ ທີ່ມີເງິນຕາຕ່າງປະເທດຢູ່ໃນຄອບຄອງ ຍັງສາມາດເປີດບັນຊີເງິນຝາກ, ສາມາດຖອນ , ໂອນ ຕາມປະເພດບັນຊີ ແລະ ສະກຸນເງິນ ທີ່ຕົນຄອບຄອງໄດ້ຕາມປົກກະຕິ. ພ້ອມດຽວກັນນີ້, ຂ້າພະເຈົ້າ ຂໍແຈ້ງຂ່າວຕື່ມວ່າ ລັດຖະບານ ພວມກະກຽມຈະນຳສະເໜີຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບປັບປຸງ ຕໍ່ກອງປະຊຸມສະໄຫມສາມັນ ເທື່ອທີ 3 ຂອງສະມາຊິກສະພາແຫ່ງຊາດ ຊຸດທີ IX ໃນອີກບໍ່ພໍເທົ່າໃດວັນຂ້າງໜ້າ ຊຶ່ງຮ່າງກົດໝາຍດັ່ງກ່າວ ຍັງຄົງຮັກສາສິດໃນການຖື

ຄອງ ແລະ ນຳໃຊ້ເງິນຕາຕ່າງປະເທດ ຄືກັບສະບັບປັດຈຸບັນ ໝາຍຄວາມວ່າ ສາມາດຖືຄອງໃນຮູບແບບເງິນສົດ ເງິນຝາກໄດ້, ແຕ່ກ່ອນຈະນຳໃຊ້ຊຳລະຄ່າສິນຄ້າ ແລະ ບໍລິການຕ່າງໆ ຢູ່ພາຍໃນປະເທດ ໃຫ້ແລກປ່ຽນເປັນເງິນກີບສາກ່ອນ. ໃນໂອກາດນີ້, ຂໍຮຽກຮ້ອງໃຫ້ ພໍ່ແມ່ປະຊາຊົນລາວ ທີ່ເປັນລູກຄ້າຂອງທະນາຄານທຸລະກິດ ມີຄວາມເຊື່ອໝັ້ນ ຕໍ່ການເຄື່ອນໄຫວຂອງລະບົບທະນາຄານ, ບໍ່ຫລົງເຊື່ອ ຕໍ່ກະແສຂ່າວທີ່ບໍ່ເປັນທາງການ ຫຼື ມີຂໍ້ສົງໄສປະການໃດ ຂໍໃຫ້ປະສານຫາພາກສ່ວນກ່ຽວຂ້ອງ ໃຫ້ຄວາມກະຈ່າງແຈ້ງ ເພື່ອເຂົ້າໃຈໃຫ້ຖືກຕ້ອງ ປະກອບສ່ວນເຂົ້າໃນການປັບປຸງແກ້ໄຂວຽກງານຄຸ້ມຄອງມະຫາພາກ ຂອງລັດ ກໍຄືການເຄື່ອນໄຫວທຸລະກິດ ແລະ ເພື່ອຜົນປະໂຫຍດລວມຂອງປະຊາຊົນລາວບັນດາເຜົ່າໃຫ້ມີຊີວິດການເປັນຢູ່ກັບເຂົ້າສູ່ສະພາບປົກກະຕິ ແລະ ເຂັ້ມແຂງຂຶ້ນເທື່ອລະກ້າວ. ໃນກໍລະນີຫາກທ່ານມີຄຳເຫັນ, ມີຄຳຕຳນິຕິຊົມ ຫຼື ຕ້ອງການສົນໃຈຮູ້ບັນຫາໃດສະເພາະທ່ານສາມາດສົ່ງຄຳເຫັນໃນນາມສ່ວນຕົວ ຫຼື ໃນນາມການຈັດຕັ້ງມາຍັງຫ້ອງການທະນາຄານ ແຫ່ງ ສປປລາວ ຫຼື ຕູ້ຮັບຄຳເຫັນຕໍ່ໜ້າສຳນັກງານ ທຫລ ພວກເຮົາຍິນດີຮັບຟັງ ແລະ ພ້ອມທີ່ຈະອະທິບາຍຊີ້ແຈງໃນໂອກາດຕໍ່ໄປ, ພວກເຮົາພ້ອມທີ່ຈະເອົາຄຳຄິດຄຳເຫັນຂອງບັນດາທ່ານໄປໝູນໃຊ້ເຂົ້າໃນການປັບປຸງວຽກງານຄຸ້ມຄອງເງິນຕາຕ່າງປະເທດໃຫ້ມີປະສິດທິຜົນດີຂຶ້ນກວ່າເກົ່າ.

ໃນໂອກາດນີ້, ທ່ານຫົວໜ້າກົມນະໂຍບາຍເງິນຕາ ຍັງໄດ້ຕອບສຳພາດຕໍ່ຄຳຖາມຂອງບັນດາສື່ມວນຊົນທີ່ມີຄວາມສົນໃຈກ່ຽວກັບເຄື່ອງມືນະໂຍບາຍເງິນຕາຂອງທະນາຄານ ແຫ່ງ ສປປ ລາວ ອີກດ້ວຍ.

**#ຂ່າວ ແລະ ພາບໂດຍ: ນາງ ປາໃນ ພົມທະລາ**

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ